# ສ້າງຄວາມເຂັ້ມແຂງດ້ານຫ້ອງວິເຄາະ
# (ສູນວິເຄາະ ແລະ ລະບາດວິທະຍາ)

# 1. ຜົນການຈັດຕັ້ງປະຕິບັດປີ 2024

## ຜົນການຈັດຕັ້ງປະຕິບັດປີ 2024 ໃນ 1 ປີຜ່ານມາ ໄລຍະ ທັນສາ 2 (ມິຖຸນາ-ທັນວາ 2024)

- **MF 2**: ກອງປະຊຸມປຶກສາຫາລືຮ່ວມກັນ ແລະ ສ້າງຕັ້ງກຸ່ມທີ່ປຶກສາດ້ານວິຊາການຂອງວຽກງານເສື່ອມສານວິເຄາະການແພດ 2024, ກອງປະຊຸມຈັດທີ່ໂຮງແຮມດອນຈັນພາເລດ, ຄັ້ງວັນທີ 3-4 ກັນຍາ 2024.

- **MF 4**: ກອງປະຊຸມກ່ຽວກັບນະໂຍບາຍພື້ນຖານສໍາລັບການປະສົມປະສານຂອງຫ້ອງວິເຄາະ ປີ 2024, ທີ່ໂຮງແຮມ ວິໄລວົງ, ເມືອງ ວັງວຽງ, ແຂວງວຽງຈັນ. ຄັ້ງວັນທີ 4-8 ພະຈິກ 2024.

- **MF 6**: ກອງປະຊຸມດ້ານວິຊາການ ແລະ ການປຶກສາຫາລືກ່ຽວກັບປຶ້ມຄູ່ມື (SOPs) ສໍາລັບບການເຊື່ອມສານໃນການຮ່ວມມື ຫ້ອງວິເຄາະ, ການຄຸ້ມຄອງຕົວຢ່າງ. ທີ່ໂຮງແຮມ ວິໄລວົງ, ເມືອງວັງວຽງ, ແຂວງວຽງຈັນ. ໃນວັນທີ 27-28 ພະຈິກ 2024.

- **MF 9**: ການກໍາຈັດສິ່ງເສດເຫຼືອ, ອະນາໄມ ແລະ ນັບອຸປະກອນຮັບໃຊ້ວຽກງານວິເຄາະ ຢູ່ໃນສາງສູນວິເຄາະ ແລະ ລະບາດວິທະຍາ ປີ 2024. ການຈັດຕັ້ງປະຕິບັດສໍາເລັດ ໃນວັນທີ 26 ຕຸລາ 2024 ທີ່ ສູນວິເຄາະ ແລະ ລະບາດວິທະຍາ.

- **MF 15**: ການຈັດຕັ້ງປະຕິບັດລົງກວດສອບຮັບຮອງຢັ້ງຢືນຕູ້ປອດເຊື້ອໃນຫ້ອງວິເຄາະ ປີ 2024, ຈັດຕັ້ງປະຕິບັດຢູ່ຫ້ອງວິເຄາະໂຮງໝໍແຂວງ ແລະ ບາງໂຮງໝໍເມືອງ ກະຊວງສາທາລະນະສຸກ ໃນຂອບເຂດທົ່ວປະເທດ, ຈັດຕັ້ງປະຕິບັດໃນວັນທີ 03 ພະຈິກ 2024 ແລະ ສໍາເລັດໃນເດືອນ ມັງກອນ 2025.

# 2. ບັນຫາ-ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ

- ການຈັດຕັ້ງປະຕິບັດ**ລົງກວດສອບຮັບຮອງຢັ້ງຢືນຕູ້ປອດເຊື້ອໃນຫ້ອງວິເຄາະ** ປີ 2024, ເຫັນວ່າຊັກຊ້າບໍ່ໄດ້ຕາມແຜນຍ້ອນວ່າບໍ່ມີອຸປະກອນການຮັບຮອງຕູ້ປອດເຊື້ອດັ່ງນັ້ນໄດ້ຂໍຢືມອຸປະກອນຈາກພາກສ່ວນ
- **ການຊອກຫາບຸກຄາລະກອນທີ່ມີປະສົບການ** ແລະ ຄວາມສາມາດ ຕາມ TOR ອາດຈະໃຊ້ເວລາ
- ພາຍຫຼັງໄດ້ຮັບການບຸລະນະຮັກສາເຄື່ອງຍິນເອັກສະເປີດເຫັນວ່າ**ໂມດູນບໍ່ຜ່ານຕາມມາດຕະຖານມີຈຳນວນຫຼາຍ**, ມີການປ່ຽນຈຳນວນໜຶ່ງແຕ່ຍັງບໍ່ທັນພຽງພໍ, ປະຈຸບັນຍັງຕ້ອງການຈຳນວນ **19 ໂມດູນ** ແລະ ໃນມີເຄື່ອງຍິນເອັກສະເປີດຫາຍໄປ 1 ເຄື່ອງ ແລະ ໜຶ່ງເຄື່ອງຢູ່ໃນແຂວງບໍ່ແກ້ວບໍ່ຢູ່ໃນບັນຊີລາຍການດັ່ງກ່າວ
- ການຮັບສະໝັກຜູ້ຊ່ວຍສອນໃນພື້ນທີ່ຍັງລ້າຊ້າເນື່ອງຈາກການຕໍ່ອາຍຸ MOU ລະຫວ່າງ HPA ແລະ DCDC
- ກຳລັງຂໍຂໍ້ຕົກລົງກ່ຽວກັບ TOR ຂອງ LTWG ຈາກສູນທີ່ກ່ຽວຂ້ອງ
- **ຂັ້ນຕອນ ແລະ ຂອດໄຫຼວຽນເອກະສານ ຂໍອະນຸມັດງົບປະມານ** ຂ້ອນຂ້າງຍາວ ແລະໃຊ້ເວລາ

# 3. ຂໍ້ສະເໜີໃນການແກ້ໄຂບັນຫາ

- ສະເໜີຈັດຊື້ອຸປະກອນການກວດສອບຮັບຮອງຕູ້ປອດເຊື້ອຈຳນວນ 1 ຊຸດ
- ສະເໜີໃຫ້ປັບແບບແຜນການເຮັດວຽກຂອງແຕ່ລະຂັ້ນໂດຍສະເພາະຊ່ຽວຊານ ແລະ ພາກສ່ວນທີ່ກ່ຽວຂ້ອງ
- ສະເໜີໃຫ້ປັບປຸງການປະສານງານແຕ່ລະຂັ້ນໃຫ້ຄ່ອງແຄ້ວວ່ອງໄວກວ່າເດີ່ມ
- ສະເໜີການຂື້ນແຜນເງິນໂດຍສະເພາະແມ່ນລາຄາກາງ ໂຮງແຮມລາຄາຕ່ຳສຸດ ແລະ ສຸງສຸດຂອງແຕ່ລະເຂດ, ລະຄານ້ຳມັນ, ການເຊົ່າລົດ ໃຫ້ເປັນເອກະພາບກັນ ແລະ ເປີດກ້ວາງໃຫ້ມີຫຼາຍພາກສວນມີສ່ວນຮ່ວມ.
- ສະເໜີໃຫ້ມີການອົບຮົມການເຮັດເອກະສານ, ຂັ້ນຕອນຈັດຊື້ຈັດຈ້າງ, ຂັ້ນພາກສວນກ່ຽວຂ້ອງ ແລະ ຂັ້ນກະຊວງໃຫ້ຊັດເຈນໄດ້ຮັບຮູ້ກັນຢ່າງທົ່ວເຖິງ
- ສະເໜີໃຫ້ຊ່ຽວຊານຊ່ວຍແນະນຳ ແລະ ກວດແກ້ເອກະສານໃຫ້ແກ່ແຕ່ລະພາກລະພາກສ່ວນໃຫ້ເປັນລະບົບ
- ສະເໜີໃຫ້ກະຊວງການເງິນ ເຮັດນິຕິກຳເພື່ອໃຫ້ແຕ່ລະພາກສ່ວນເອກະພາບໃນການຈັດຕັ້ງປະຕິບັດ

# 4. ແຜນການ-ງົບປະມານປີ 2025

| ແຜນກິດຈະກຳ | ງົບປະມານ |
|---|---|
| ***ການເພີ່ມປະສິດທິພາບຂອງລະບົບຫ້ອງວິເຄາະ ແລະ ໜ່ວຍງານ QM*** | |
| • **MF 3**: ການສ້າງຕັ້ງໜ່ວຍງານ QM ແລະ ການຈັດຈ້າງບຸກຄະລະກອນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳທີ່ກ່ຽວຂ້ອງກັບ MF QMS | • ງົບປະມານ **MF 3** ແມ່ນຈຳນວນເງິນ 1,702,575,514 ກີບ (82,967$) |
| ***ການພັດທະນາພື້ນຖານນະໂຍບາຍ ສຳລັບຫ້ອງວິເຄາະປະສົມປະສານ*** | |
| • **MF 5:** ຄຳແນະນຳໃນການຈັດພິມ - ຄູ່ມືມາດຕະຖານແຫ່ງຊາດສຳລັບໂຄງສ້າງພື້ນຖານ, ການທົດສອບ, ເຕັກນິກ ແລະ ອຸປະກອນສຳລັບຫ້ອງວິເຄາະທັງໝົດ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)**<br><br>• **MF 7:** ຄຳແນະນຳໃນການຈັດພິມ- ປື້ມຄູ່ມື SOPs ສຳລັບການເຊື່ອມສານ ຫ້ອງວິເຄາະ - ການດຳເນີນງານ ແລະ ການຄຸ້ມຄອງຕົວຢ່າງ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)**<br><br>• **MF 8:** ເພີ່ມຄວາມເຂັ້ມແຂງການເຊື່ອມໂຍງ EQA ທີ່ມີຢູ່ແລ້ວ - ສະໜັບສະໜູນກອງປະຊຸມ EQA, ທີ່ໂຮງແຮມ ທະວີສຸກ, ເມືອງ ວັງວຽງ, ແຂວງວຽງຈັນ **(ກຳລັງປະກອບເອກະສານຢືນຂໍງົບປະມານ)**<br><br>• **MF 9:** ເຮັດສັນຍາຮ່ວມກັບ ບໍລິສັດທີ່ຖືກຄັດເລືອກໃນການກຳຈັດສິ່ງເສດເຫຼືອ ເພື່ອກຳຈັດທາດເຄມີທີ່ໝົດອາຍຸ ແລະ ລວມເຖິງກຳຈັດອຸປະກອນສິນເປືອງທີ່ແຕກຫັກ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)** | • ງົບປະມານ **MF 5** ແມ່ນຈຳນວນເງິນ 88,675,808 ກີບ (4,321$)<br><br>• ງົບປະມານ **MF 7** ແມ່ນຈຳນວນເງິນ 88,675,808 ກີບ (4,321$)<br><br>• ງົບປະມານ **MF 8** ແມ່ນຈຳນວນເງິນ 393,676,000 ກີບ<br><br>• ງົບປະມານ **MF 9** ແມ່ນຈຳນວນເງິນ 143,606,188ກີບ (6,998$) |

# 4. ແຜນການ-ງົບປະມານປີ 2025 (ຕໍ່)

| ແຜນກິດຈະກໍາ | ງົບປະມານ |
|---|---|
| ***ເສີມສ້າງຄວາມສາມາດດ້ານຄວາມປອດໄພທາງຊີວະພາບ/ຄວາມປອດໄພທາງຊີວະພາບ*** | |
| • **MF 10:** ກອງປະຊຸມເຜີຍແຜ່ການປັບປຸງວັດສະດຸຊີວະພາບ/ຄວາມປອດໄພ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)**<br><br>• **MF 11:** ປື້ມຄູ່ມື ແລະ ການຈັດພິມເອກະສານ ສໍາລັບການປັບປຸງວັດສະດຸຄວາມປອດໄພທາງຊີວະພາບ/ຄວາມປອດໄພ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)**<br><br>• **MF 15:** ກວດຢັ້ງຢືນຕູ້ປອດເຊື້ອ 40 ຕູ້ ໃນຫ້ອງວິເຄາະໂຮງໝໍແຂວງ 17 ແຫ່ງ ແລະ ໃນຫ້ອງວິເຄາະລະດັບສູນກາງ 6 ແຫ່ງ **(ຍັງບໍ່ໄດ້ຈັດຕັ້ງປະຕິບັດ)**<br><br>• **MF 28:** ການຈັດຊື້ HEPA Filter ທີ່ປອດໄພທາງຊີວະພາບ, ໂຄມໄຟ UV ແລະ ການບໍລິການທົດແທນສໍາລັບເຄື່ອງ HEPA Filter ໃນຕູ້ປອດເຊື້ອ (ການກໍາຈັດ ແລະ ທົດແທນເຄື່ອງ exhaust HEPA Filter) **(ກໍາລັງກະກຽມເອກະສານເພື່ອຂໍຈັດຊື້)** | • ງົບປະມານ **MF 10** ແມ່ນຈໍານວນເງິນ 73,322,978 ກີບ (3,573.56$)<br><br>• ງົບປະມານ **MF 11** ແມ່ນຈໍານວນເງິນ 88,675,808 ກີບ (4,321.22$)<br><br>• ງົບປະມານ **MF 15** ແມ່ນຈໍານວນເງິນ 283,407,882 ກີບ (13,810.63$)<br><br>• ງົບປະມານ **MF 28** ແມ່ນຈໍານວນເງິນ 902,924,000 ກີບ(44,000$) |

# 4. ແຜນການ-ງົບປະມານປີ 2025 (ຕໍ່)

| ແຜນກິດຈະກຳ | ງົບປະມານ |
|---|---|
| ***ການເສີມສ້າງລະບົບການຄຸ້ມຄອງຂໍ້ມູນຫ້ອງວິເຄາະ (LIMS). ເນື່ອງຈາກ ການຈັດຕັ້ງກິດຈະກຳນີ້ ແມ່ນ ໃຊ້ເວລາດົນນານ ຈຶ່ງໄດ້ ປັບກິດຈະກຳ ແລະ ງົບປະມານ*** | |
| • **MF 21:** ກອງປະຊຸມປຶກສາຫາລືກ່ຽວກັບລະບົບຄຸ້ມຄອງຂໍ້ມູນການບົ່ງມະຕິດ້ານວິເຄາະ LIMS ວັນທີ 25-26 ກຸມພາ 2025, ທີ່ໂຮງແຮມ ດອນຈັນ ພຣາເລດ **(ສຳເລັດແລ້ວ )**<br><br>• **MF 24:** ການປັບປຸງເຄືອຂ່າຍອິນເຕີເນັດຢູ່ພາຍໃນ ສູນວິເຄາະ ແລະ ລະບາດວິທະຍາ **(ກຳລັງປະກອບເອກະສານ ຍື່ນຂໍງົບປະມານ)**<br><br>• **MF 26:** ການບໍລິການ ແລະ ການບຳລຸງຮັກສາເຄື່ອງ GXP (GeneXpert Warranty Extension Plus Agreement 2 years entered into force 1 Jan 2025) ສັນຍາ ກັບ Cepheid ຜ່ານ GDF | • ງົບປະມານ **MF 21** ແມ່ນຈຳນວນເງິນ **155,116,000** ກີບ<br><br>• ງົບປະມານ **MF 24** ແມ່ນຈຳນວນເງິນ 292.500.000 ກີບ<br><br>• ງົບປະມານ **MF 26** ແມ່ນຈຳນວນເງິນ (573,658$) |

# 4. ແຜນການ-ງົບປະມານປີ 2025 (ຕໍ່)

| ແຜນກິດຈະກຳ | ງົບປະມານ |
|---|---|
| ***ການສ້າງຕັ້ງເຄືອຂ່າຍການຂົນສົ່ງຕົວຢ່າງ (ST).*** | • ງົບປະມານແມ່ນຈຳນວນເງິນ 1,571,010,623 ກີບ (76,558$) |
| • NCLE ຕົກລົງເຫັນດີກັບ ແຜນວຽກທີ່ສະເໜີໂດຍ FIND ລວມທັງໜ້າວຽກທີ່ໄດ້ກຳນົດໄວ້ ແລະ ກຳນົດເວລາໃນນັ້ນ.<br><br>• NCLE ຕົກລົງເຫັນດີກັບ ການສະເໜີ Lab TWG ToR ຈຳເປັນຕ້ອງໄດ້ຮັບການຕົກລົງຈາກສູນທີ່ກ່ຽວຂ້ອງທັງຫມົດ.<br><br>• ສະມາຊິກ Lab TWG ໄດ້ຖືກລະບຸໄວ້ ແລະ ເມື່ອໄດ້ຮັບຂໍ້ຕົກລົງກ່ຽວກັບ ToR ຈາກສູນທີ່ກ່ຽວຂ້ອງທັງໝົດ, ຈະຍື່ນໃຫ້ DCDC ເພື່ອອະນຸມັດ.<br><br>• ການຈັດຊື້ອຸປະກອນ ແລະ ເຄື່ອງໃຊ້ສຳລັບການຂົນສົ່ງຕົວຢ່າງ **(ຄວາມຄືບໜ້າ)**<br>    ○ ລາຍການ ແລະ ຂໍ້ມູນສະເພາະ ແມ່ນໄດ້ກະກຽມປຶກສາຫາລືກັບທີມ FIND | |

# ຂອບໃຈຫຼາຍໆ

